# ເປັນຫຍັງຈຶ່ງມີຄວາມເຈັບປວດຫລາຍແທ້?

## ເປັນຫຍັງພະເຈົ້າຜູ້ເປັນພະເຈົ້າແຫ່ງຄວາມຮັກຈຶ່ງປ່ອຍໃຫ້ມະນຸດມີຄວາມທຸກທໍລະມານ?

ໃນປະເທດສະຫະລັດອະເມຣິກາ ໄດ້ມີຊາຍຄົນໜຶ່ງ ລາວຖືກໄຟຟ້າແຮງສູງຊັອດ ແລະລາວກໍໄປຫາບໍລິສັດປະກັນໄພຂອງລາວ ບອກໃຫ້ພວກເຂົາຈ່າຍຄ່າຄວາມເສຍຫາຍແລະຄ່າບາດເຈັບທີ່ລາວໄດ້ຮັບ. ບໍລິສັດປະກັນໄພປະຕິເສດບໍ່ຍອມຈ່າຍ ເພາະວ່ານີ້ແມ່ນການກະທຳຂອງພະເຈົ້າ. ຖ້າຫາກວ່າພະເຈົ້າໄດ້ກະທຳເຊັ່ນນີ້ແທ້ ຊາຍຄົນນີ້ເລີຍຕັດສິນໃຈຟ້ອງພະເຈົ້າແລະລວມທັງໂບດຄຣິສຕຽນອີກ 55 ແຫ່ງໃນເມືອງນັ້ນ. ໃນຂະນະທີ່ຢູ່ໃນສານ ອາຈານໂບດຜູ້ໜຶ່ງໄດ້ເວົ້າອອກມາວ່າ, "ຂ້າພະເຈົ້າເຊື່ອວ່າຄຳວ່າ "ການກະທຳຂອງພະເຈົ້າ" ແມ່ນຖືກໃຊ້ຢ່າງຜິດພາດ.

ພະເຈົ້າບໍ່ໄດ້ເຮັດໃຫ້ເຫດຮ້າຍແລະອຸບັດຕິເຫດຕ່າງໆເກີດຂຶ້ນ. ເຫດຮ້າຍແລະອຸບັດຕິເຫດທີ່ເກີດຂຶ້ນຄວນຮ້ອງວ່າ "ການກະທຳຂອງມານຮ້າຍ." ຕາມພະຄຳພີແລ້ວ, ອາຈານໂບດຜູ້ນັ້ນໄດ້ເວົ້າຖືກຕ້ອງແລ້ວ. ນີ້ບໍ່ແມ່ນການກະທຳຂອງພະເຈົ້າ. ແຕ່ວ່າພະເຈົ້າກໍຍັງຖືກກ່າວຫາວ່າເປັນຜູ້ກະທຳ. ແທ້ທີ່ຈິງແລ້ວມານຮ້າຍຄວນໄດ້ຮັບຂໍ້ກ່າວຫານີ້ ເພາະວ່າມັນເປັນຜູ້ຢູ່ເບື້ອງຫລັງຂອງອຸບັດຕິເຫດແລະເຫດການເລວຮ້າຍຕ່າງໆທີ່ມະນຸດປະເຊີນ.

ເມື່ອພີ່ນ້ອງມອງໄປເບິ່ງເຫດການຕ່າງໆທີ່ກຳລັງເກີດຂຶ້ນໃນໂລກນີ້ ພີ່ນ້ອງກໍຈະເລີ່ມມີຄວາມຮູ້ສຶກລະມັດລະວັງໂຕຕໍ່ອຳນາດມືດຫລືອຳນາດຊົ່ວຮ້າຍໃນໂລກໜ່ວຍນີ້.
ທຸກໆທີ່ທີ່ພີ່ນ້ອງເບິ່ງໄປ ພີ່ນ້ອງກໍຈະເຫັນຮ່ອງຮອຍຂອງການຂ້າຟັນກັນ, ການໃຊ້ຄວາມຮຸນແຮງໃສ່ກັນ ແລະອີກຫລາຍໆເຫດການ. ເຫດການເຫລົ່າເກີດຂຶ້ນຢູ່ທຸກບ່ອນທຸກທີ່ແລະກໍເກີດເປັນປະຈຳທຸກມື້!

ແລ້ວແມ່ນໃຜລ່ະທີ່ຮັບຜິດຊອບຕໍ່ເຫດການເຫລົ່ານີ້? ຫລາຍໆຄົນໃສ່ຮ້າຍພະເຈົ້າວ່າຢູ່ເບື້ອງຫລັງຂອງຄວາມຫຍຸ້ງຍາກຕ່າງໆທີ່ພວກເຂົາມີ. ພີ່ນ້ອງຄົງໄດ້ຍິນເຂົາຈົ່ມເຂົາເວົ້າເປັນປະຈຳວ່າ, "ເປັນຫຍັງພະເຈົ້າຈຶ່ງເຮັດແນວນີ້ກັບຂ້ອຍ?"

ໃຫ້ເຮົາມາເບິ່ງນຳກັນວ່າພະຄຳພີໄດ້ເວົ້າແນວໃດກ່ຽວກັບການຕໍ່ສູ້ກັນລະຫວ່າງອຳນາດແຫ່ງຄວາມດີແລະອຳນາດແຫ່ງຄວາມຊົ່ວ, ອຳນາດແຫ່ງຄວາມສຸກແລະອຳນາດແຫ່ງຄວາມໂສກເສົ້າ, ອຳນາດແຫ່ງຄວາມເຈັບໄຂ້ໄດ້ປ່ວຍແລະອຳນາດແຫ່ງການມີສຸຂະພາບແຂງແຮງ. ພີ່ນ້ອງອາດຈະ

ຖາມວ່າ, “ຖ້າພະເຈົ້າບໍ່ໄດ້ນໍາຄວາມໂສກເສົ້າແລະບັນຫາຕ່າງໆເຂົ້າມາໃນໂລກນີ້ ແລ້ວໃຜລ່ະເປັນຜູ້ນໍາມາແລະແມ່ນໃຜລ່ະຈະຮັບຜິດຊອບຕໍ່ເຫດການເລວຮ້າຍຕ່າງໆທີ່ເກີດຂຶ້ນທຸກມື້ນີ້?”

ພະຄໍາພີໄດ້ຊີ້ໂຕຜູ້ທີ່ຜິດນັ້ນໃຫ້ເຮົາຮູ້! ພະເຍຊະໄດ້ເລົ່າເລື່ອງກ່ຽວກັບຊາວນາຜູ້ວ່ານເຂົ້າດີລົງໃນນາ ແລະເມື່ອເມັດເຂົ້າດີນັ້ນງອກຂຶ້ນມາ ກໍມີຕົ້ນເຂົ້ານົກງອກຂຶ້ນມານໍາ. ພວກສາວົກກໍສົງໃສແລະຖາມວ່າ “ພະອາຈານ, ຖ້າຊາວນາຜູ້ນັ້ນວ່ານແນວເຂົ້າດີ, ແລ້ວຕົ້ນເຂົ້ານົກນັ້ນງອກຂຶ້ນມາໄດ້ແນວ?”

(ມັດທາຍ 13:37-39) ພຣະອົງຊົງຕອບເຂົາວ່າ, “ຜູ້ຫວ່ານເມັດດີນັ້ນຄືບຸດມະນຸດ ແລະນານັ້ນຄືແຜ່ນດິນໂລກ ສ່ວນເມັດດີນັ້ນໄດ້ແກ່ພົລເມືອງແຫ່ງຣາຊອານາຈັກ ແຕ່ເຂົ້ານົກໄດ້ແກ່ ພົລເມືອງຂອງມານຮ້າຍ ສັດຕຣູຜູ້ຫວ່ານເຂົ້ານົກຄືພຍາມານ...”

ພະເຈົ້າຮັກແລະໃຈດີຕໍ່ທຸກຄົນ. ມີອໍານາດອື່ນພະຍາຍາມນໍາຄວາມເສຍຫາຍ, ຄວາມເສົ້າໂສກ, ຄວາມຕາຍ ແລະ ຄວາມເຈັບປວດເຂົ້າມາໃນຊີວິດຂອງລູກພະເຈົ້າ. ໜັງສືເຫລັ້ມສຸດທ້າຍໃນພະຄໍາພີ ຄືໜັງສືພະນິມິດໄດ້ບອກໃຫ້ເຮົາຮູ້ທຸກສິ່ງທຸກຢ່າງວ່າມັນໄດ້ເລີ່ມຕົ້ນແນວໃດ ເພື່ອວ່າພວກເຮົາຈະໄດ້ຮູ້ຄວາມຈິງກ່ຽວກັບສິ່ງທີ່ໄດ້ເກີດຂຶ້ນໃນສະຫວັນທີ່ເປັນສາເຫດຂອງບັນຫາຄວາມຫຍຸ້ງ-ຍາກຕ່າງໆນາໆໃນໂລກນີ້. ໃຫ້ເຮົາມາສຶກສານໍາກັນວ່າມານຮ້າຍນັ້ນມາຈາກໃສ. ຄັ້ງໜຶ່ງໄດ້ເກີດມີສົງຄາມໃນສະຫວັນ!

(ພະນິມິດ 12:7-9) “ຂນະນັ້ນໄດ້ເກີດສົງຄາມຂຶ້ນໃນຟ້າສວັນ ມີຄາເອນກັບເທພບໍຣິວານຂອງຕົນໄດ້ສູ້ຮົບກັບພຍານາກ ພຍານາກກັບບໍຣິວານຂອງມັນກໍຕໍ່ສູ້ ແຕ່ຝ່າຍພຍານາກບໍ່ອາດຊັຍຊະນະໄດ້ ແລະພວກພຍານາກຈຶ່ງບໍ່ມີບ່ອນຢູ່ໃນສວັນຕໍ່ໄປອີກ ພຍານາກໃຫຍ່ຊຶ່ງເປັນງູແຕ່ເດີກດໍາບັນທີ່ເຂົາເອີ້ນວ່າ ເດັຽໂບໂລ ແລະ ຊາຕານ ຜູ້ຫລອກລວງມະນຸດທັງໂລກ ກໍຖືກຊັດຖິ້ມລົງເສັຽ ພຍານາກກັບບໍຣິວານຂອງມັນກໍຖືກຖິ້ມລົງເທິງແຜ່ນດິນໂລກ”

ໃຫ້ເຮົາມາສັງເກດນໍາກັນວ່າພະຄໍາພະນິມິດ 12:3,4 ໄດ້ເວົ້າແນະນໍາແນວໃດກ່ຽວກັບພະຍານາກຫລືພະຍາມານ. (ພະນິມິດ 12:3,4) “ມີຫມາຍສໍາຄັນອີກຢ່າງນຶ່ງປາກົດໃນສວັນດັ່ງນີ້ ມີພຍານາກໃຫຍ່ສີແດງໂຕນຶ່ງ ມີເຈັດຫົວ ສິບເຂົາ ຢູ່ເທິງຫົວນັ້ນມີມົງກຸດເຈັດອັນ ຫາງພຍານາກໄດ້ຟາດດວງດາວໃນທ້ອງຟ້ານຶ່ງສ່ວນສາມລົງໃສ່ແຜ່ນດິນໂລກ”

ທູດສະຫວັນໜຶ່ງສ່ວນສາມ ໄດ້ຫລົງເຊື່ອຄຳລວງຂອງພະຍາມານແລະຕໍ່ສູ້ພະເຈົ້າ. ໃຫ້ເຮົາມາຊອກຮູ້ເພີ່ມເຕີມນຳກັນກ່ຽວກັບທູດສະຫວັນຕົນໜຶ່ງທີ່ຊື່ລູຊີເຟີ້ (Lucifer).
ໃນພະຄຳພີພາກພະສັນຍາເກົ່າ ພະຍາມານໄດ້ຖືກຂະໜານນາມວ່າ ລາຊາແຫ່ງຕີເຣ (King of Tyre)

(ເອເຊກຽນ 28:12-14) "ພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ວ່າ 'ເຈົ້າເປັນຕາແຫ່ງຄວາມສົມບູນແບບເຕັມດ້ວຍສະຕິປັນຍາ ແລະມີຄວາມງາມຢ່າງຄົບບໍຣິບູນ ເຈົ້າຢູ່ໃນເອເດນ ສວນຂອງພຣະຜູ້ເປັນເຈົ້າ ເພັດພອຍທຸກຢ່າງເປັນເສື້ອຂອງເຈົ້າ ເຮົາຕັ້ງເຈົ້າໃຫ້ຢູ່ກັບເຊຣູບິມ ຜູ້ພິທັກທີ່ໄດ້ເຈີມຕັ້ງໄວ້ເຈົ້າຢູ່ເທິງພູອັນສັກສິດແຫ່ງພຣະເຈົ້າ ແລະເຈົ້າເດີນຢູ່ຖ້າມກາງສີລາໄຟ'"

ລູຊີເຟີ້ເຄີຍເປັນທູດສະຫວັນທີ່ງົດງາມໃນທຸກດ້ານ. ລາວໄດ້ເປັນທູດສະຫວັນທີ່ຢືນຢູ່ຕໍ່ພະພັກພະເຈົ້າ. ລູຊີເຟີ້ໄດ້ມີຕຳແໜ່ງສູງໃນສະຫວັນ. ຢູ່ຂ້າງໆພະທີ່ນັ່ງຂອງພະເຈົ້າມີທີ່ນັ່ງຂອງທູດສະຫວັນສອງທີ່ນັ່ງ.  ໜຶ່ງໃນທີ່ນັ່ງນັ້ນກໍແມ່ນທີ່ນັ່ງຂອງລູຊີເຟີ້ ຜູ້ເຊິ່ງພາຍຫລັງໄດ້ກາຍມາເປັນມານ ກໍບໍ່ຮູ້ຄືກັນວ່າເປັນຫຍັງລາວຈຶ່ງເຮັດຈຶ່ງກາຍເປັນມານ ພະຍາມານບໍ່ພໍໃຈທີ່ເປັນຮອງພະເຈົ້າ ມັນຢາກຈະເປັນພະເຈົ້າ! ໄດ້ມີບາງສິ່ງບາງຢ່າງເກີດຂຶ້ນກັບລູຊີເຟີ້ແລະຄວາມສຳພັນລະຫວ່າງລາວກັບພະເຈົ້າ ພະເຈົ້າໄດ້ບອກລາວວ່າ,

(ເອເຊກຽນ 28:15,17) "ເຈົ້າກໍປາສຈາກຕຳໜິໃນວິທີການທັງຫລາຍຂອງເຈົ້າ ຕັ້ງແຕ່ວັນທີ່ເຈົ້າໄດ້ຖືກສ້າງຂຶ້ນມາ, ຈົນ(ເມື່ອ)ພົບຄວາມບາບຊົ່ວໃນຕົວເຈົ້າ ຈິດໃຈຂອງເຈົ້າຜະຍອງຂຶ້ນເພາະຄວາມງາມຂອງເຈົ້າ ເຈົ້າກະທຳໃຫ້ສະຕິປັນຍາຂອງເຈົ້າເສື່ອມເສັຽລົງ ເພາະເຫັນແກ່ຄວາມງາມຂອງເຈົ້າ..."

ທູດສະຫວັນຜູ້ສະງ່າງາມໄດ້ກາຍເປັນທູດສະຫວັນທີ່ເຕັມໄປດ້ວຍຄວາມທະນົງ, ຢາກເປັນໃຫຍ່ກວ່າພະເຈົ້າ ແລະຢາກມີອຳນາດເໜືອທຸກສິ່ງ. ທູດສະຫວັນຜູ້ນີ້ຊ່າງມີຄວາມກ້າຫານແທ້ ທີ່ໄປເຮັດທ້າທາຍພະເຈົ້າແລະຂໍເປັນຜູ້ຄອບຄອງຈັກກະວານ.

(ເອຊາຢາ 14:12-14) "ໂອ(ລູຊີເຟີ້) ດາວປະຈຳກາງເວັນເອີຍ, ພໍ່ໂອຣົດແຫ່ງພຣະອະຣຸນ ເຈົ້າລົ່ນລົງມາຈາກຟ້າສວັນແລ້ວ ເຈົ້າຖືກຕັດລົງມາຍັງພື້ນດິນຢ່າງໃດຫນໍ ເຈົ້າຣຳພຶງໃນໃຈຂອງເຈົ້າວ່າ 'ຂ້າຈະຂຶ້ນໄປຍັງຟ້າສວັນ ເຫນືອດວງດາວທັງຫລາຍຂອງພຣະເຈົ້າ ຂ້າຈະຕັ້ງພຣະທີ່ນັ່ງຂອງຂ້າໃນທີ່ສູງນັ້ນ ຂ້າຈະກະທຳຕົວຂອງຂ້າເຫມືອນອົງຜູ້ສູງສຸດ'"

ເມື່ອຄຳເວົ້າອັນຍິ່ງພະຫຍອງເຫລົ່ານີ້ໄດ້ອອກມາຈາກປາກຂອງລູຊີເຟີ້ ສະຫວັນອັນເຕັມໄປດ້ວຍຄວາມຮັກແລະຄວາມກົມກຽວກໍໄດ້ແຕກແຍກກາຍເປັນແຜ່ນດິນແຫ່ງຄວາມເຫັນແກ່ໂຕລ້ານໆແຜ່ນ ຫລັງຈາກນັ້ນລູຊີເຟີ້ກໍຊັກຊວນໃຫ້ທູດສະຫວັນອົງອື່ນແລະເວົ້າຍົວະພວກເຂົາໃຫ້ເກີດຄວາມບໍ່ພໍໃຈໃນພະເຈົ້າ. ລູຊີເຟີ້ໄດ້ພະຍາມຍາມທຳລາຍຄວາມຮັກແລະຄວາມຍຸຕິທຳຂອງພະເຈົ້າຢ່າງຊ້າໆ ແລະຕໍ່ມາທູດສະຫວັນຫລາຍອົງກໍຫລົງເຊື່ອຄຳຂອງລູຊີເຟີ້.

ເຮົາບາງຄົນອາດສົງໄສວ່າເປັນຫຍັງພະເຈົ້າບໍ່ທຳລາຍພະຍາມານໃນຕອນນັ້ນເລີຍ. ຖ້າພະເຈົ້າຢາກຈະເຮັດແນວນັ້ນພະອົງກໍສາມາດເຮັດໄດ້ ພະອົງສາມາດທຳລາຍລູຊີເຟີ້ແລະທູດສະຫວັນທີ່ຮ່ວມຕໍ່ສູ້ໃນຊົ່ວພິບຕາດຽວ. ແຕ່ຖ້າພະອົງເຮັດແນວນັ້ນ ທຸກສິ່ງທີ່ພະອົງສ້າງມາຈະຮັບໃຊ້ພະອົງດ້ວຍຄວາມຢ້ານກົວ. ຖ້າພະອົງເຮັດແນວນີ້ມັນກໍບໍ່ຕ່າງຫຍັງກັບຄົນເຢຍລະມັນເຮັດຕາມຄຳສັ່ງຂອງຮິດເລີ້ (Hitler) ທຸກຢ່າງໃນຊ່ວງສົງຄາມໂລກຄັ້ງທີສອງ ເພາະພວກເຂົາຢ້ານກົວລາວ.

ພະເຈົ້າຊົງເປັນພະເຈົ້າແຫ່ງຄວາມຮັກ. ພະອົງພໍພະໄທໃນສາຍສຳພັນຮັກຂອງພະອົງກັບສິ່ງທີ່ພະອົງສ້າງ ພະອົງຢາກໃຫ້ພວກເຂົານະມັດສະການພະອົງເພາະວ່າພວກເຂົາຮັກແລະເຊື່ອຟັງພະອົງ.

ຊາຕານໄດ້ເຮັດທ້າທາຍກົດໝາຍແລະຄວາມຍຸດຕິທຳຂອງພະເຈົ້າ, ແຕ່ພະເຈົ້າກໍບໍ່ໄດ້ບັງຄັບໃຫ້ທຸກຄົນປະຕິບັດຕາມກົດນີ້ ເພື່ອວ່າພວກເຂົາຈະໄດ້ຮູ້ວ່າພະອົງເປັນນາຍຂອງເຂົາ ພະອົງສ້າງກົດນີ້ມາເພື່ອເປັນເກາະປ້ອງກັນໃຫ້ເຂົາມີຄວາມສະຫງົບສຸກແລະຄວາມສຸກ. ກົດຂອງພະອົງເປັນເໝືອນໄຟແລະປ້າຍຈະລາຈອນເຊິ່ງມີໄວ້ເພື່ອຄວາມປອດໄພແລະຄວາມສຸກຂອງຜູ້ປະຕິບັດຕາມ. ທູດສະຫວັນຜູ້ທີ່ມີສະຫງ່າລາສີກວ່າທູດສະຫວັນໃດໆໄດ້ຫລົງຄິດວ່າລາວສາມາດຄວບຄຳຈັກກະວານນີ້ໄດ້ດີກວ່າພະເຈົ້າຜູ້ເຊິ່ງສ້າງລາວມາ! ຊາຕານໄດ້ເຮັດໃຫ້ໂຕມັນເອງກາຍເປັນມານຮ້າຍ!

ພະເຈົ້າໄດ້ໃຫ້ທຸກຄົນມີສິດເຕັມທີ່ໃນການເລືອກວ່າພວກເຂົາຈະເຊື່ອຟັງຫລືບໍ່ເຊື່ອຟັງພະອົງ. ດ້ວຍຄວາມທ່ຽງທຳແລະຄວາມຮັກ ພະເຈົ້າໄດ້ອະນຸຍາດໃຫ້ຊາຕານສະແດງໃຫ້ຈັກກະວານເຫັນວິທີທີ່ລາວຈະບໍລິຫານໂລກ. ຊາຕານໄດ້ຖືກອະນຸດຍາດໃຫ້ສະແດງອຸປະນິໄສແຫ່ງຄວາມຜິດບາບອອກມາ ພວກເຮົາບໍ່ສາມາດເຂົ້າໃຈໄດ້ເຕັມທີ່ວ່າສິ່ງນີ້ເກີດຂຶ້ນໄດ້ແນວໃດ ທັ້ງໆທີ່ວ່າພະເຈົ້າຊົງແສນດີແລະຮັກທູດສະຫວັນທຸກຕົນແລະທຸກສິ່ງທີ່ພະອົງສ້າງ. ສິ່ງນີ້ເປັນຄວາມເລິກລັບ ມີພຽງແຕ່ພະເຈົ້າຜູ້ເປັນອຳມະຕະເທົ່ານັ້ນສາມາດອະທິບາຍໄດ້.

ສົງຄາມທີ່ເກີດຂຶ້ນໃນສະຫວັນດຽວນີ້ກໍຍັງບໍ່ຈົບເທື່ອ ມີແຕ່ວ່າສົງຄາມນີ້ໄດ້ປ່ຽນສະໜາມຮົບ! ແຜ່ນດິນໂລກນີ້ໄດ້ກາຍເປັນສະໜາມແຫ່ງການຕໍ່ສູ້ກັນລະຫວ່າງຄວາມດີແລະຄວາມຊົ່ວ ແລະກໍເປັນທີ່ທີ່ຊາຕານໄດ້ສະແດງໃຫ້ເຫັນເຖິງວິທີທີ່ມັນຈະບໍລິຫານໂລກ. ເປັນຫຍັງຄືເປັນໂລກນີ້? ເປັນຫຍັງໂລກເຮົາຈຶ່ງເປັນ

(1 ໂກຣິນໂທ 4:9) "ໂຕລະຄອນໃຫ້ຈັກກະວານຄືເທວະດາແລະມະນຸດຊົມ"

ພະຜູ້ສ້າງໄດ້ສ້າງໂລກນີ້ໃຫ້ສວຍສົດງົດງາມແລະດີເລີດໃນທຸກດ້ານ. ເມື່ອຊາຕານເຫັນຄວາມສວຍສົດງົດງາມຂອງໂລກນີ້ມັນກໍເລີຍຄິດຢາກຄອບຄອງໂລກ. ຊາຕານຢາກຄອບຄອງໂລກນີ້ແລະມັນກໍບໍ່ຢາກໃຫ້ຄົນທັງຫລາຍໃນໂລກນີ້ຮັກແລະສັດຊື່ຕໍ່ພະເຈົ້າ ມັນໄດ້ພະຍາຍາມເຮັດໃຫ້ໂລກນີ້ກາຍ-ເປັນໂລກໃໝ່, ເປັນໂລກເຊິ່ງບໍ່ມີຄວາມສວຍຄວາມງາມ. ເຖິງແມ້ວ່າອາດາມແລະເອວາຜູ້ເປັນບິດາມານດາຂອງມະນຸດທັງຫລາຍໄດ້ຖືກສ້າງມາໃຫ້ດີພ້ອມໃນທຸກດ້ານ, ແຕ່ວ່າພວກເຂົາກໍຢູ່ໃນສະ-ຖານທີ່ທີ່ພວກເຂົາມີໂອກາດເຮັດຜິດໄດ້. ພວກເຂົາມີອິດສະຫລະໃນການເລືອກທີ່ຈະຮັກແລະເຮັດຕາມຄຳບອກສອນຂອງພະເຈົ້າຫລືຈະເພີກເສີຍຕໍ່ຄຳບອກສອນຂອງພະອົງ. ຄວາມຈົງຮັກພັກດີໃນພະເຈົ້າຂອງເຂົາໄດ້ຖືກທົດສອບ ແລະການທົດສອບນັ້ນກໍກ່ຽວກັບຕົ້ນໄມ້ພຽງຕົ້ນດຽວ.

(ປະຖົມມະການ 2:16,17) "..ໝາກໄມ້ທຸກໆກົກໃນສວນນີ້ເຈົ້າກິນໄດ້ໝົດ ເວັ້ນໄວ້ແຕ່ກົກທີ່ໃຫ້ຮູ້ຈັກຄວາມດີ ແລະຄວາມຊົ່ວ ເຈົ້າຢ່າກິນ ຖ້າເຈົ້າຂືນກິນໝາກໄມ້ໃນກົກນີ້ ເຈົ້າຈະຕ້ອງເຖິງແກ່ຄວາມຕາຍ"

ຂໍ້ຫ້າມນີ້ແມ່ນສົມເຫດສົມຜົນຫລາຍ. ຄິດວ່າພວກເຂົາຄົງຮູ້ສຶກມີຄວາມປອດໄພແນ່ນອນ ແລະຍ້ອນຄວາມຮູ້ສຶກນີ້ເມື່ອພວກເຂົາຢູ່ຄົນດຽວ ນັ້ນແຫລະຄືຕອນທີ່ພວກເຂົາຕົກຢູ່ໃນອັນຕະລາຍທີ່ສຸດ. ນີ້ແຫລະຄືສິ່ງທີ່ເກີດຂຶ້ນກັບເອວາ ຊາຕານໄດ້ໃຊ້ເວດມົນເຂົ້າໃນການຫລອກລວງເອວາ. ໜ້ອຍໜັກໜ້ອຍໜາທີ່ຊາຕານຈະເປີດເຜີຍທາດແທ້ຂອງມັນ. ມັນເຈົ້າເລ້ຫລາຍ. ໃນປະຈຸບັນນີ້ຊາຕານໄດ້ໃຊ້ລັດທະບານຫລືມາໃນຮູບລັດທະບານ, ອົງການຕ່າງໆ, ຄົນແລະແມ້ກະທັ້ງງູ! ເພາະສະນັ້ນໂປໂລຈຶ່ງເວົ້າວ່າ: (ເອເຟໂຊ 6:11,12) "ຈົ່ງສວມຍຸທພັນຄົບຊຸດຊຶ່ງມາຈາກພຣະເຈົ້າເພື່ອທ່ານທັງຫລາຍຈະສາມາດຢືນຕໍ່ສູ້ກັບກົນອຸບາຍຂອງພຍາມານໄດ້ ເພາະວ່າເຮົາທັງຫລາຍບໍ່ໄດ້ຕໍ່ສູ້ກັບມະນຸດທັມມະດາ ແຕ່ຕໍ່ສູ້ກັບຜູ້ປົກຄອງ ຜູ້ມີອຳນາດ ເຈົ້າໂລກທີ່ຢູ່ໃນໂມຫະຄວາມມືດແຫ່ງໂລກນີ້ ແລະຕໍ່ສູ້ກັບກຳລັງວິນຍານຝ່າຍຄວາມຊົ່ວຮ້າຍໃນອາກາດສະຖານ."

ເອວາໄດ້ຖືກຫລອກ ນາງບໍ່ເຄີຍເອະໃຈເລີຍວ່າຄຳເວົ້າທີ່ງູເວົ້າມານັ້ນແມ່ນມາຈາກຊາຕານ ມານຮ້າຍໄດ້ຖາມນາງຜ່ານງູວ່າ (ປະຖົມມະການ 3:1) "ຈິງຫລື ທີ່ພຣະເຈົ້າຊົງຫ້າມບໍ່ໃຫ້ພວກເຈົ້າກິນຫມາກໄມ້ໃນສວນນີ້?"

ເອວາຕອບວ່າ (ປະຖົມມະການ 3:2-4) "ຫມາກໄມ້ທຸກໆກົກໃນສວນນີ້ ພວກເຮົາກິນໄດ້ ເອັ້ນໄວ້ແຕ່ຫມາກໄມ້ໃນກົກທີ່ຢູ່ກາງສວນນັ້ນ ເພາະພຣະເຈົ້າບອກບໍ່ໃຫ້ພວກເຮົາກິນ ຫລືກະທັ່ງແຕະຕ້ອງເປັນເດັດຂາດ ຖ້າພວກເຮົາຂືນກິນພວກເຮົາຕ້ອງຕາຍ"

ງູຈິ່ງຕອບວ່າ, "ບໍ່ເປັນຄວາມຈິງ, ພວກເຈົ້າຈະບໍ່ຕາຍດອກ" ເມື່ອໄດ້ຍິນຄຳເວົ້າຂອງງູແລ້ວ ເອວາຕ້ອງແປກໃຈແນ່ນອນທີ່ວ່າ ສິ່ງທີ່ງູເວົ້າມານີ້ແມ່ນແຕກຕ່າງຈາກສິ່ງທີ່ພະເຈົ້າໄດ້ບອກພວກເຂົາ. ຄິດວ່າເອວາຕ້ອງເກີດມີຄວາມສັບສົນແນ່ນອນ ແລະທັນໃດນັ້ນງູກໍເວົ້າຕໍ່ໄປອີກວ່າ (ປະຖົມມະການ 3:5) "ພຣະເຈົ້າເວົ້າເຊັ່ນນັ້ນກໍເພາະພຣະອົງຊົງຮູ້ດີວ່າ ເມື່ອໃດເຈົ້າກິນຫມາກໄມ້ນັ້ນ ເຈົ້າຈະຮູ້ແຈ້ງເຫັນຈິງກັບຈະຮູ້ການດີ ແລະການຊົ່ວເຫມືອນດັ່ງພຣະອົງ"

ພະຍາມານໄດ້ເວົ້າວ່າ ພະເຈົ້າບໍ່ຍຸດຕິທຳ ພະອົງຫວງຂອງດີໄວ້. ເບິ່ງແລ້ວ ຊາຕານກຳລັງໃສ່ຮ້າຍປ້າຍສີພະເຈົ້າ. ເອວາຄິດວ່າຄຳເວົ້າຂອງຊາຕານກໍຟັງມີເຫດຜົນແລະນາງກໍຫລົງເຊື່ອ

(ປະຖົມມະການ 3:6) "ຜູ້ຍິງເຫັນວ່າຫມາກໄມ້ໃນກົກນັ້ນຊ່າງງາມ ແລະເປັນຫນ້າຢາກກິນອີ່ຫລີນອກນີ້ນາງຍັງຄິດວ່າຈະມີສະຕິປັນຍາອີກ ດັ່ງນັ້ນນາງຈິ່ງຕັດສິນໃຈປິດເອົາຫມາກໄມ້ແລ້ວກິນ"

ແລະເອວາກໍສົ່ງໝານໄມ້ໃຫ້ອາດາມແລະອາດາມກໍກິນໝາກໄມ້ນັ້ນ. ອາດາມແລະເອວາບໍ່ຜ່ານບົດທົດສອບແຫ່ງຄວາມຮັກແລະຄວາມພັກດີຕໍ່ພະເຈົ້າ ອັນນີ້ເກີດຂຶ້ນບໍ່ດົນກ່ອນທີ່ພວກເຂົາທັງສອງໄດ້ຮູ້ວ່າມີອັນໃດອັນໜຶ່ງຜິດປົກກະຕິ. ຊາຕານໄດ້ແອບແຝງໂຕເຂົ້າມາໃນໂລກ! ໃນຕອນນັ້ນເອງມັນໄດ້ອ້າງວ່າມັນເປັນ "ຜູ້ຄອບຄອງໂລກ"

ພໍຕົກຕອນແລງມາ ພະເຈົ້າກໍມາຮ້ອງຫາອາດາມແລະເອວາ. ນີ້ຄືໂອກາດສຸດທ້າຍທີ່ພວກເຂົາໄດ້ຍ່າງໄດ້ສົນທະນາກັບພະເຈົ້າຜູ້ສ້າງເຂົາມາແບບໂດຍຕົງ ທຸກມື້ນີ້ເຮົາບໍ່ສາມາດສົນທະນາກັບພະເຈົ້າແບບຊັ້ນໄດ້ອີກແລ້ວ! ພວກເຂົາໄດ້ແລ່ນໄປລີ້ທີ່ພຸ່ມໄມ້! ແລະໃນທີ່ສຸດອາດາມກໍຍ່າງຊ້າໆອອກມາຈາກພຸ່ງໄມ້ ແລະ ສາລະພາບອອກມາວ່າ (ປະຖົມມະການ 3:10) "ຂ້າພຣະອົງໄດ້ຍິນສຽງ

ຍ່າງຂອງພຣະອົງໃນສວນ ຂ້າພຣະອົງຢ້ານຈຶ່ງຫລົບລີ້ຊ່ອນຕົວຢູ່ເພາະວ່າຂ້າພຣະອົງກຳລັງເປືອຍກາຍ"

ກ່ອນໜ້ານີ້ອາດາມບໍ່ເຄີຍມີຄວາມຮູ້ສຶກຢ້ານກົວ, ຄວາມຢ້ານກົວນີ້ແມ່ນຜົນຂອງຄວາມບາບ ຄວາມບາບເຮັດໃຫ້ມະນຸດຢ້ານກົວພະເຈົ້າ
ພະເຈົ້າຈຶ່ງຖາມວ່າ (ປະຖົມມະການ 3:11) "ໃຜບອກວ່າເຈົ້າເປືອຍກາຍ ບໍ່ແມ່ນເຈົ້າກິນຫມາກໄມ້ທີ່ເຮົາໄດ້ຫ້າມນັ້ນຫລື?"

ອາດາມຕອບວ່າ (ປະຖົມມະການ 3:12) "ໂດຍ, ແມ່ນຜູ້ຍິງທີ່ພຣະອົງປະທານໃຫ້ນັ້ນເອົາຫມາກໄມ້ໃຫ້ຂ້າພຣະອົງກິນ"

ສອງສາມຊົ່ວໂມງກ່ອນໜ້ານີ້ອາດາມພ້ອມທີ່ຈະຕາຍເພື່ອເອວາ. ແຕ່ວ່າຕອນນີ້ລາວໄດ້ຖິ້ມໂທດຖິ້ມຜິດໄປທີ່ນາງ ແລະກ່າວໂທດໃສ່ພະເຈົ້າເຊັ່ນກັນທີ່ໄດ້ສ້າງນາງມາ. ຄວາມບາບໄດ້ທຳລາຍຄວາມຮັກອັນສວຍສົດງົດງາມ

ແຕ່ວ່າເອວາກໍແກ້ໂຕເກັ່ງຄືກັນ ເມື່ອພະເຈົ້າຖາມນາງວ່ານາງໄດ້ເຮັດຫຍັງລົງໄປ ນາງໄດ້ຕອບວ່າ (ປະຖົມມະການ 3:13) "ງູໄດ້ຍົວະໃຫ້ຂ້າພຣະອົງກິນ" ເອວາກໍກ່າວໂທດພະເຈົ້າເຊັ່ນກັນ!
ຈະເວົ້າອີກທາງໜຶ່ງ ສິ່ງທີ່ນາງເວົ້າກໍຄື "ງູທີ່ພະອົງສ້າງມານັ້ນແຫລະຍົວະໃຫ້ຂ້າພະອົງກິນ."

ມື້ນັ້ນເປັນມື້ທີ່ຄວາມຕາຍໄດ້ເລີ່ມເຂົ້າມາໃນຊີວິດຂອງອາດາມແລະເອວາ! ເພື່ອບໍ່ໃຫ້ພວກເຂົາກິນໝາກໄມ້ຈາກຕົ້ນໄມ້ແຫ່ງຊີວິດ ພະເຈົ້າໄດ້ເນລະເທດພວກເຂົາອອກຈາກສວນອັນເປັນບ້ານຂອງເຂົາ. ພະຍາມານບອກວ່າພວກເຂົາຈະບໍ່ຕາຍ ແຕ່ພະຄຳພີໄດ້ເວົ້າວ່າ (ປະຖົມມະການ 5:5) "ແລ້ວ(ອາດາມແລະເອວາ)ໄດ້ເຖິງແກ່ກຳໄປ ເມື່ອອາຍຸເກົ້າຮ້ອຍສາມສິບປີ"

ຊ້າເກີນໄປແລ້ວ ເມື່ອພວກເຂົາຮູ້ວ່າ ພະຍາມານ (ໂຢຮັນ 8:44) "ຕົວະແລະເປັນພໍ່ຂອງການຕົວະ"

ຄົນເຮົາມັກກ່າວໂທດພະເຈົ້າເມື່ອຄວາມເລວຮ້າຍເຂົ້າມາໃນຊີວິດຂອງເຮົາ ທັ້ງໆທີ່ວ່າຊາຕານເປັນຜູ້ເຮັດໃຫ້ເກີດສິ່ງເລວຮ້າຍເຫລົ່ານີ້ ແລະຊາຕານກໍຄວນເປັນຜູ້ຮັບຜິດຊອບ. ຊາຕານເປັນຜູ້ທີ່ນຳຄວາມບາບ, ປັນຫາ ແລະ ຄວາມຫຍຸ້ງຍາກຕ່າງໆເຂົ້າມາໃນໂລກ.

ພະເຍຊູໄດ້ເປີດໜ້າກາກຂອງມານຮ້າຍແລະເປີດເຜີຍວິທີທີ່ມັນຫລອກທຳຮ້າຍຄົນ.
ໃນຂະນະທີ່ພະອົງກຳສັ່ງສອນຢູ່ໃນໂຮງທຳມະເທດໜາໃນວັນສະບາໂຕນັ້ນ ພະເຍຊູກໍສັງເກດເຫັນ
ຍິງຫລັງກົ່ງຄົນໜຶ່ງ. ແລ້ວພະອົງກໍເກີດມີຄວາມສົງສານລາວແລະຮັກສາລາວ.
ແຕ່ນາຍໂຮງທຳນັ້ນຂຸ່ນເຄື່ອງໃຈ ບໍ່ພໍໃຈທີ່ພະເຍຊູຮັກສາລາວໃນວັນສະບາໂຕເຊິ່ງເປັນວັນບໍລິສຸດ
ຂອງພະເຈົ້າ. ແລະພະເຍຕອບກໍໄດ້ຕອບກັບໄປວ່າ (ລູກາ 13:16) "ສ່ວນຍິງຄົນນີ້ເປັນລູກຫລານ
ຂອງອັບຣາຮາມ ຊຶ່ງຊາຕານຜູກມັດໄວ້ໄດ້ສິບແປດປີແລ້ວ ບໍ່ສົມຄວນຫລືທີ່ຈະໃຫ້ນາງພົ້ນຈາກ
ເຄື່ອງຜູກມັດນີ້ໃນວັນສະບາໂຕ"

ພະເຍຊູໄດ້ເວົ້າວ່າຊາຕານໄດ້ຜູກມັດຍິງນັ້ນໄວ້ໄດ້ສິບແປດປີແລ້ວ.
ຊາຕານຄືຜູ້ທີ່ເຮັດຜິດ! ຄວາມຈິງແລ້ວ ຊາຕານເປັນຜູ້ທີ່ຢູ່ເບື້ອງຫລັງຂອງໂລກຮ້າຍ, ຄວາມທຸກທໍ-
ລະມານຕ່າງໆ ແລະຄວາມຕາຍ. ອາດບໍ່ມີບ່ອນໃດໃນພະຄຳພີອີກແລ້ວທີ່ເຮົາສາມາດພົບເຫັນກົນ-
ລະຍຸດໃນການຫລອກລວງຂອງຊາຕານໄດ້ເດັ່ນຊັດຢ່າງທີ່ໃນບົດທຳອິດຂອງໜັງສືໂຢບ, ໃນຕອນ
ທີ່ພະຍາມານສົນທະນາກັບພະເຈົ້າ. ບໍ່ດົນຫລັງຈາກທີ່ຊາຕານຕົກມາຈາກສະຫວັນ ບຸດຕ່າງໆຂອງ
ພະເຈົ້າໄດ້ມາປາກົດຕໍ່ພະພັກພະເຈົ້າ. ຊາຕານກໍມາປາກົດເຊັ່ນກັນ. ລອງໃຫ້ເຮົາຄິດເຖິງເຫດການ
ທີ່ ບຸດຕ່າງໆຂອງພະເຈົ້າໄດ້ມາປະຊຸມກັນແລະຊາຕານໄດ້ມາຮ່ວມປະຊຸມແບບບໍ່ໄດ້ເຊື້ອເຊີນ

(ໂຢບ 1:7) ພຣະຜູ້ເປັນເຈົ້າຈຶ່ງຖາມພຍາມານວ່າ, "ເຈົ້າມາແຕ່ໃສ" ຈະເວົ້າອີກຢ່າງໜຶ່ງກໍຄື
"ແມ່ນໃຜເຊີນເຈົ້າມາ? ເຈົ້າມີສິດຫຍັງຈຶ່ງມາຢູ່ທີ່ນີ້?" ຊາຕານຕອບພະເຈົ້າວ່າ, (ໂຢບ 1:7) ...
"ຂ້າພຣະອົງໄປໆມາໆທົ່ວໂລກ" ຊາຕານອ້າງວ່າມັນເປັນເຈົ້າຄອງໂລກ. ມັນໄດ້ໄປຍາດເອົາຕຳ-
ແໜ່ງຂອງອາດາມມາ!

ອາດາມໄດ້ຖືກເອີ້ນວ່າ "ບຸດຂອງພະເຈົ້າ" (ໃຫ້ເບິ່ງໃນ ລູກາ 3:38) ເໝືອນຫລາຍໆອົງທີ່ໄດ້ມາ
ເຂົ້າເຝົ້າພະເຈົ້າໃນມື້ນັ້ນ. ອາດເປັນໄປໄດ້ບໍ່ວ່າບຸດເຫລົ່ານັ້ນແມ່ນຜູ້ປົກຄອງໂລກຕ່າງໆ ເໝືອນ
ຢ່າງອາດາມໄດ້ເຄີຍເປັນຜູ້ປົກຄອງໂລກນີ້?

ຊານຕານໄດ້ອ້າງວ່າມັນເປັນຕົວແທນຂອງໂລກນີ້. ພະເຈົ້າໄດ້ກ່າວກັບຊາຕານວ່າ: (ໂຢບ
1:8,9,11) "ເຈົ້າໄດ້ພິຈາຣະນາໄຕ່ຕອງເບິ່ງໂຢບຜູ້ຮັບໃຊ້ຂອງເຮົາຫລືບໍ່ ໃນໂລກນີ້ບໍ່ມີໃຜຊື່ສັດ
ແລະດີເໝືອນເຂົາ ເຂົາຂາບໄຫວ້ເຮົາ ແລະບໍ່ກະທຳໃນສິ່ງທີ່ຊົ່ວຮ້າຍໃດໆທັງສິ້ນ" ພຍາມານໄດ້
ທູນຕອບວ່າ, "ຖ້າໂຢບບໍ່ໄດ້ຫຍັງເຂົາຈະຂາບໄຫວ້ພຣະອົງຫລື

ແຕ່ບັດນີ້ ສົມມຸດວ່າພຣະອົງເອົາທຸກສິ່ງທີ່ເຂົາມີນັ້ນຫນີໄປ ເຂົາກໍຈະປ້ອຍດ່າພຣະອົງຕໍ່ຫນ້າພຣະອົງ”

ຊ່າງເປັນການທົດສອບທີ່ໃຫຍ່ແທ້! ຊາຕານອ້າງວ່າເຫດຜົນທີ່ໂຢບສັດຊື່ຕໍ່ພະເຈົ້າເພາະວ່າພະເຈົ້າໄດ້ປະທານສິ່ງຕ່າງໃຫ້ ບໍ່ແມ່ນຍ້ອນລາວຮັກແລະໄວ້ໃຈໃນພະອົງ. ພະເຈົ້າເວົ້າກັບຊາຕານວ່າ:(ໂຢບ: 1:12) “ ທຸກສິ່ງທີ່ໂຢບມີນັ້ນເຈົ້າເອົາໄປໄດ້ແຕ່ເຈົ້າຢ່າທຳຮ້າຍເຂົາ” ແລ້ວພຍາມານໄດ້ອອກໄປຈາກພະພັກພະເຈົ້າ. ຊາຕານໄດ້ພາກທຸກສິ່ງທຸກຢ່າງທີ່ໂຢບມີໄປຈາກລາວ ສິ່ງທີ່ມັນພາກໄປມີ

ອັນທີໜຶ່ງ: ພວກຊາເບອານໄດ້ລັກເອົາສັດລ້ຽງແລະຂ້າຄົນງານຂອງລາວ
ອັນທີສອງ: ແກະແລະຄົນລ້ຽງແກະຖືກຟ້າຜ່າຕາຍ.
ອັນທີສາມ: ຄົນຄັນເດອານໄດ້ປຸ້ນເອົາອູດຂອງລາວໄປໝົດ
ອັນທີສີ່ (ເປັນສິ່ງທີ່ຮ້າຍແຮງທີ່ສຸດ): ລົມພະຍຸໄດ້ພັດທຳລາຍເຮືອນລູກຊາຍກົກຂອງໂຢບໃນຂະ-ນະທີ່ເຮືອນຈັດງານລ້ຽງ ແລະລູກໆຂອງໂຢບຕາຍໝົດທຸກຄົນ.

ສົງສານໂຢບແທ້ໆ! ລາວໄດ້ຄິດວ່າພະເຈົ້າໄດ້ເອົາທຸກສິ່ງທຸກຢ່າງທີ່ລາວມີແລະພະອົງເປັນຜູ້ນຳຄວາມເຈັບປວດຕ່າງໆມາໃຫ້ລາວ. ລາວບໍ່ຮູ້ເລີຍວ່າແທ້ທີ່ຈິງແລ້ວມານຮ້າຍເປັນຜູ້ກະທຳ! ເຖິງແມ້ວ່າຊີວິດຈະເຕັມໄປດ້ວຍຄວາມເຈັບປວດ ແຕ່ໂຢບກໍຍັງສັດຊື່ຕໍ່ພະເຈົ້າ

(ໂຢບ 1:21) ໂຢບໄດ້ກ່າວວ່າ “...ພຣະຜູ້ເປັນເຈົ້າຊົງໂຜດປະທານ ແລະບັດນີ້ພຣະອົງຊົງເອົາໄປເສັຽ ສາທຸການແດ່ພຣະນາມຂອງພຣະອົງ”

ເຖິງແມ້ວ່າໂຢບໄດ້ສູນເສຍລູກໆແລະທຸກສິ່ງ ແຕ່ລາວກໍຍັງເຊື່ອໃນພະເຈົ້າ ເຊື່ອວ່າພະເຈົ້າຊົງດີບໍ່ປ່ຽນ. ແຕ່ວ່າຊາຕານກໍຍັງຢາກບໍ່ພໍໃຈ ມັນເຂົ້າໄປທ້າພະເຈົ້າອີກວ່າ (ໂຢບ 2:4-6) “ມະນຸດຍ່ອມສລະທຸກສິ່ງເພື່ອໃຫ້ມີຊີວິດຄົງຢູ່, ແຕ່ບັດນີ້ ສົມມຸດວ່າພຣະອົງທຳຮ້າຍຮ່າງກາຍຂອງເຂົາ ເຂົາກໍຈະປ້ອຍດ່າພຣະອົງຕໍ່ຫນ້າພຣະອົງ” ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງກ່າວຕໍ່ພຍາມານວ່າ, “ແມ່ນແລ້ວ ເຂົາຢູ່ໃຕ້ອຳນາດຂອງເຈົ້າ ຂໍແຕ່ເຈົ້າຢ່າຂ້າເຂົາເທົ່ານັ້ນ”

ພີ່ນ້ອງຄິດວ່າໂຢບຈະຍັງສັດຊື່ຕໍ່ພະເຈົ້າບໍ່ ຫລືລາວຈະຫັນໜີຈາກພະເຈົ້າບໍ່ເມື່ອການທົດລອງນັ້ນໜັກຂຶ້ນກວ່າເກົ່າ?

(ໂຢບ 2:7) "ແລ້ວພຍາມານໄດ້ຫນີອອກຈາກພຣະພັກພຣະຜູ້ເປັນເຈົ້າ ແລະມັນໄດ້ທຳໃຫ້ຮ່າງ-ກາຍຂອງໂຢບເປັນບາດທົ່ວໄປ" ຂໍ້ພະຄຳພີນີ້ ໃນພະຄຳພີສະບັບພາສາອັງກິດ ເຂົາໄດ້ໃຊ້ຄຳວ່າ "ຝີ" ແຕ່ພາສາລາວເຮົາໃຊ້ຄຳວ່າ "ບາດ" ພີ່ນ້ອງກໍຄົງຮູ້ດີວ່າ ຝີພຽງບ່ອນດຽວ ມັນກໍຍັງເຮັດໃຫ້ຜູ້ທີ່ມີຝີນັ້ນເຈັບແທບເປັນແທບຕາຍ. ແລ້ວນີ້ ຖ້າເຂົາມີຝີນັບຕັ້ງແຕ່ຫົວຮອດຕີນ ເຂົາຈະເຈັບກວ່ານັ້ນຫລາຍປານໃດ? ເຖິງແມ້ວ່າຊາຕານໄດ້ເອົາພາກເອົາທຸກສິ່ງທຸກຢ່າງລວມທັງຊີວິດຂອງລູກໆລາວແລະເຮັດໃຫ້ຕົນຕົວລາວເຕັມໄປດ້ວຍຝີ ລາວກໍຍັງສັດຊື່ຕໍ່ພະເຈົ້າ. ລາວຊ່າງເປັນຄົນທີ່ເຂັ້ມ-ແຂງແທ້ໆ! ພະຄຳພີໄດ້ກ່າວວ່າ, (ໂຢບ 1:22) "ເຖິງແມ່ນວ່າທຸກຢ່າງນີ້ໄດ້ເກີດຂຶ້ນ ໂຢບກໍບໍ່ໄດ້ທຳບາບ ຫລືກ່າວໂທດພຣະເຈົ້າແຕ່ຢ່າງໃດເລີຍ"

ແມ່ນໃຜລ່ະທີ່ພາກເອົາສິ່ງຕ່າງໆແລະນຳຄວາມເຈັບປວດມາໃຫ້ໂຢບ? ຊາຕານ! ແມ່ນໃຜລ່ະທີ່ລັກສັດລ້ຽງແລະຂ້າຄົນງານຂອງລາວ? ຊາຕານ! ແມ່ນໃຜລ່ະເຮັດໃຫ້ມີລົມພາຍຸພັດພາກເອົາຊີວິດຂອງລູກໆຂອງໂຢບໄປຈາກລາວ? ຊາຕານ

ພະເຈົ້າອາດອະນຸຍາດໃຫ້ເຮົາພົບຄວາມຫຍຸ້ງຍາກເພື່ອພິສູດເຖິງຄວາມສັດຊື່ແລະຄວາມຮັກທີ່ເຮົາມີຕໍ່ພະອົງ. ແຕ່ວ່າຊາຕານເປັນຜູ້ຜິດແລະຢູ່ເບື້ອງຫລັງຂອງສິ່ງບໍ່ດີຕ່າງໆໃນໂລກນີ້!

ຕອນນີ້ພີ່ນ້ອງກັບຂ້າພະເຈົ້າກຳລັງຕົກຢູ່ໃຈກາງຂອງບົດລະຄອນເຊິ່ງເປັນບົດຕໍ່ສູ້ກັນລະຫວ່າງເຈົ້າໜ້າທີ່ຮັກສາກົດໝາຍແລະຜູ້ຮ້າຍປອງຮ້າຍທຳລາຍກົດໝາຍ, ລະຫວ່າງພະຜູ້ສ້າງແລະຊາຕານ ຜູ້ເປັນຕົ້ນເຫດຂອງຄວາມກະບົດ. ພວກເຮົາບໍ່ແມ່ນຜູ້ຊົມ. ຢາກຫລືບໍ່ຢາກພວກເຮົາຕ້ອງໄດ້ມີສ່ວນກ່ຽວຂ້ອງ

ຄວາມຄິດທີ່ວ່າຊາຕານຄືສິ່ງເລິກລັບຫລືແຮງໂນ້ມນ້າວໃຈເຮັດໃຫ້ພວກເຮົາຂາດຈາກການຕຽມພ້ອມທີ່ຈະປະເຊີນກັບຄວາມເຈົ້າເລ້ເພທຸບາບຂອງຊາຕານ.



ໜັງສືພະນິມິດໄດ້ກ່າວວ່າ: (ພະນິມິດ 12:12) "... ແຕ່ວິບັດຈະມີແກ່ແຜ່ນດິນໂລກແລະນ້ຳທະເລເພາະວ່າມານໄດ້ລົງມາຫາເຈົ້າດ້ວຍຄວາມຄຽດແຄ້ນອັນໃຫຍ່ ເພາະມັນຮູ້ວ່າເວລາຂອງມັນມີນ້ອຍ"

ເປໂຕໄດ້ຊຽນເຕືອນວ່າ: (1 ເປໂຕ 5:8) "ທ່ານທັງຫລາຍຈົ່ງຄອຍລະວັງຕົວແລະເຝົ້າຢູ່ ດ້ວຍວ່າສັດຕຣູຂອງພວກທ່ານຄືມານ ທຽວວົນວຽນໄປມາເຫມືອນໂຕສິງທີ່ແຜດສຽງຊອກຫາຄົນທີ່ມັນຈະກັດກິນໄດ້"

ເຖິງແມ້ວ່າຊາຕານໄດ້ເຮັດເຕັມທີ່ແລ້ວໃນການທຳລາຍໂລກນີ້, ພະເຈົ້າຜູ້ເປັນພະຜູ້ສ້າງໄດ້ມີແຜນສ້າງໂລກນີ້ຂຶ້ນໃໝ່ ລວມທັງໄດ້ສົ່ງພະບຸດຂອງພະອົງມາສິ້ນພະຊົນເພື່ອເຮົາອາດຈະໄດ້ຊີວິດນິລັນ. ພະຄຳພີໄດ້ກ່າວວ່າມັນໄດ້ແມ່ນຊາຕານເປັນເໝືອນໂຕສິງທີ່ທຽວວົນວຽນຜູ້ເຮັດວຽກຜ່ານກະສັດເຮໂຣດເພື່ອທີ່ຈຳເອົາຊີວິດພະຄຣິດຕອນທີ່ພະອົງຍັງເຍົາໄວ (ແຕ່ກະສັດເຮໂຣດເຮັດບໍ່ສຳເລັດ)

ຕອນທີ່ພະເຍຊູຢູ່ໃນຖິ່ນກັນດານ ມານຮ້າຍໄດ້ປອມໂຕເປັນທູດສະຫວັນມາທົດລອງພະເຊສາມເທື່ອດ້ວຍກັນ (ແຕ່ມັນກໍລົ້ມເຫລວ) ຊາຕານໄດ້ເຮັດວຽກຜ່ານປະຊາຊົນເພື່ອຈະທຳລາຍພະເຍຊູທີ່ຄາວາຣີ (ແຕ່ວ່າມັນໄດ້ຮັບຄວາມພ່າຍແພ້ຕະຫລອດໄປ) ເຖິງແມ້ວ່າພະອົງໄດ້ສິ້ນພະຊົນທີ່ຄາວາຣີ, ແຕ່ພະອົງໄດ້ເປັນຄືນມາ! ສັນລະເສີນພະເຈົ້າ!

ຄວາມເຫງົາດຽວດາຍຂອງພະເຈົ້າຈະບໍ່ຈາງຫາຍຈັກເທື່ອຫາກມະນຸດບໍ່ຄືນດີກັນກັບພະອົງ, ແລະພະອົງໄດ້ສົ່ງພະບຸດຂອງພະອົງມາປ່ຽນຊະຕາຊີວິດຂອງພີ່ນ້ອງແລະຂອງຂ້າພະເຈົ້າ. ທີ່ຄາວາຣີນັ້ນມັນໄດ້ເປັນຊົ່ວໂມງແຫ່ງໄຊຊະນະ, ເປັນວັນທີ່ທຸກຄົນໃນໂລກທີ່ໄດ້ຕົກເປັນທາດຂອງມານຮ້າຍໄດ້ກາຍເປັນອິດສະຫລະ. ມື້ນັ້ນຊາຕານໄດ້ຮັບຄວາມພ່າຍແພ້! ໂດຍການສິ້ນພະຊົນຂອງພະອົງ ພະຄຣິດໄດ້ມີສິດທີ່ຈະທຳລາຍຄວາມຊົ່ວແລະຄວາມທຸກທໍລະມານທັງປວງ ໂປໂລໄດ້ຊຽນໃນໜັງສືເຮັບເຣີ 2:14 ວ່າ: (ເຮັບເຣີ 2:14) "ເຫດສັນນັ້ນ, ເພາະພວກລູກໄດ້ຮ່ວມຊາດມະນຸດອັນດຽວກັນ ຝ່າຍພຣະອົງຈຶ່ງໄດ້ຊົງຮ່ວມຊາດມະນຸດເຫມືອນກັນ ເພື່ອໂດຍທາງຄວາມຕາຍນັ້ນ ພຣະອົງຈະໄດ້ຊົງທຳລາຍຜູ້ທີ່ມີອຳນາດແຫ່ງຄວາມຕາຍ ຄືພຍາມານ"

ຊາຕານໄດ້ສະແດງໃຫ້ຜູ້ມີປັນຍາທຸກຕົນ(ທຸກຄົນແລະທຸກອົງ)ໃນຈັກກະວານຮູ້ວ່າມັນແມ່ນໃຜ. ແລະມັນກໍຍັງໄດ້ສະແດງໃຫ້ຮູ້ເຖິງວິທີທີ່ມັນຈະບໍລິການໂລກ. ລົມພາຍຸ, ແຜ່ນດິນໄຫວ, ນ້ຳຖ້ວມ, ອາດຊະຍາກຳ, ໂລກພະຍາດ, ຄວາມເຈັບປວດ ແລະປັນຫາຕ່າງໆແມ່ນຊາຕານທັງນັ້ນທີ່ເປັນຜູ້ຢູ່ເບື້ອງຫລັງ. ສິ່ງເຫລົ່ານີ້ບໍ່ແມ່ນ "ການກະທຳຂອງພະເຈົ້າ" ມັນແມ່ນ "ການກະທຳຂອງມານຮ້າຍ"

ພີ່ນ້ອງເຫັນຫລືບໍ່ວ່າຊາຕານແລະບໍລິວານຂອງພວກມັນໄດ້ໃຊ້ອຳນາດເໜືອທຳມະຊາດມາຫລອກແລະມາທຳລາຍ?

(2 ໂກຣິນໂທ 11:14) "ການເຮັດຢ່າງນັ້ນບໍເປັນການປລາດຫຍັງດອກ ເພາະຊາຕານເອງກໍຍັງ ປອມຕົວເປັນເທວະດາຂອງຄວາມສວ່າງໄດ້"

ພີ່ນ້ອງອາດບໍ່ເຄີຍຄິດວ່າມານຊາຕານນັ້ນສາມາດເຮັດການອັດສະຈັນໄດ້. ແທ້ຈິງແລ້ວ ມັນສາມາດ ເຮັດໄດ້!

(ພະນິມິດ 16:14) "ດ້ວຍວ່າຜີເຫລົ່ານັ້ນເປັນຜີຮ້າຍທີ່ເຮັດຫມາຍສຳຄັນ"
ຊາຕານສາມາດເຮັດໝາຍສຳຄັນແລະການອັດສະຈັນ ບໍລິວານຂອງມັນກໍສາມາດເຮັດການອັດສະ-ຈັນໄດ້ເຊັ່ນກັນ. ມານຮ້າຍສາມາດເຮັດໃຫ້ມະນຸດມີພະລັງເຮັດການອັດສະຈັນ.
ພະເຢຊູໄດ້ກ່າວວ່າ

(ມັດທາຍ 24:24) "ດ້ວຍວ່າຈະມີພຣະຄຣິດທຽມ ແລະຫມໍທຳນວາຍຂີ້ໂລບຫລາຍຄົນເກີດຂຶ້ນ ສະແດງຫມາຍສຳຄັນອັນໃຫຍ່ແລະການອັດສະຈັນຕ່າງໆ ເພື່ອຖ້າເປັນໄດ້ ຈະຫລອກລວງຜູ້ທີ່ ພຣະເຈົ້າຊົງເລືອກໄວ້ໃຫ້ຫລົງ."

ຈະມີເວລາທີ່ເຮົາບໍ່ສາມາດເຊື່ອໃນຄວາມຮູ້ສຶກຂອງເຮົາໄດ້ ແລະຖ້າເຮົາບໍ່ເບິ່ງໃນພະຄຳພະເຈົ້າ ມັນກໍຍາກຫລາຍທີ່ຈະຈຳແນກອອກວ່າອັນໃດຄືຂອງແທ້ອັນໃດຄືຂອງປອມ ໃຜຄືພະຄຣິດແທ້ແລະ ໃຜຄືພະຄຣິດປອມ.

ຂ້າພະເຈົ້າມີຂ່າວດີມາບອກພີ່ນ້ອງ ຂ່າວດີນີ້ກໍຄືວ່າ ໂລກທີ່ເຮົາຄິດວ່າເປັນສະຫວັນໜ່ອຍນີ້ເຊິ່ງໄດ້ ຖືກຊາຕານປຸ້ນເອົາໄປ ອີກບໍ່ດົນພະເຈົ້າຈະລົງມາຊ່ອຍກູ້ເອົາ.
ຂ່າວດີນີ້ຄວນເຮັດໃຫ້ຄວາມຢ້ານກົວ,ຄວາມກັງວົນຂອງເຮົາໝົດໄປ. ພະເຈົ້າໄດ້ມີແຜນທີ່ຈະທຳ-ລາຍຊາຕານຜູ້ເຈົ້າເລ້ເພທຸບາຍ ແລະພວກເຮົາຈະມາສຶກສາແຜນການນີ້ນຳກັນໃນການປະຊຸມນະ-ມັດສະການເທື່ອໜ້າຂອງເຮົາ. ໃຫ້ເຮົາມາເບິ່ງນຳກັນວ່າພະຄຳພີໄດ້ເວົ້າຫຍັງກ່ຽວກັບຊາຕານ:

(ເອເຊກຽນ 28:16,18) "...ເຮົາຈະກຳຈັດເຈົ້າເສັຽຈາກພູແຫ່ງພຣະເຈົ້າ...ເຫດສັນນັ້ນເຮົາຈຶ່ງນຳ ໄຟລົງມາຈາກຫມູ່ພວກເຈົ້າ ໄຟກໍເຜົາຜານເຈົ້າ ເຮົາກະທຳໃຫ້ເຈົ້າກັບເປັນຂີ້ເທົ່າໄປເທິງພື້ນໂລ ກ..."

ຄວາມບາບແລະຄວາມເຈັບປວດທໍລະມານຈະຈາກໄປຕະຫລອດການ. ແມ່ນແລ້ວພີ່ນ້ອງທີ່ຮັກ, ພະເຍຊູຈະກັບມາໃນໄວໆນີ້! ການກັບສະເດັດມາເທື່ອນີ້ຂອງພະອົງຈະບໍ່ເປັນເໝືອນການສະເດັດມາເທື່ອກ່ອນທີ່ພະອົງໄດ້ຖືກເຂົາດູຖູກ, ຖືກຖົ່ມນ້ຳລາຍໃສ່, ຖືກປະຕິເສດ ແລະຖືກຕຶງທີ່ໄມ້ກາງແຂນ, ແຕ່ພະອົງຈະສະເດັດມາຢ່າງກະສັດເໜືອກະສັດທັງປວງແລະພະເຈົ້າເໜືອພະເຈົ້າທັງປວງ, ຂໍໃຫ້ພວກເຮົາທຸກຄົນພ້ອມສຳລັບການກັບມາຂອງພະອົງນີ້ ເພາະວ່າຖ້າພວກເຮົາບໍ່ພ້ອມພວກເຮົາກໍຈະສູນເສຍທຸກສິ່ງທຸກຢ່າງໄປ!

ບັນຫາທຸກມື້ນີ້ກໍຄື, ໃຜແນ່ທີ່ເຮົາສາມາດເຊື່ອໄດ້? ໃຜແນ່ທີ່ເຮົາສາມາດເດີນຕາມໄດ້? ພະເຈົ້າຜູ້ພະຊົນຢູ່ຫລືຊາຕານ? ຕອນນີ້ໂລກກຳລັງຖືກຂີດເສັ້ນແບ່ງໃຫ້ເປັນສອງສ່ວນ.

ຄວາມພັກດີຕໍ່ພະເຈົ້າຂອງເຮົາຢູ່ໃສ? ພະເຍຊູໄດ້ຂຽນຈົດໝາຍຮັກເຊີນຊວນເຮົາທຸກຄົນຜູ້ເປັນລູກຂອງພະອົງບໍ່ວ່າເຮົາຈະລວຍຫລືທຸກ ມີຄວາມສຸກຫລືທຸກໃຈ ຊົ່ວຫລືດີ ສະບາຍດີຫລືເຈັບປ່ວຍຫລືເປັນແນວໃດກໍແລ້ວແຕ່ ພະອົງເຊີນຊວນເຮົາທຸກຄົນ.

(ມັດທາຍ 11:28) ".. ຈົ່ງມາຫາເຮົາ..." (ໂຢຮັນ 6:37) "... ແລະຜູ້ທີ່ມາຫາເຮົາ ເຮົາຈະບໍ່ຖິ້ມອອກໄປພາຍນອກຈັກເທື່ອ" ອັນນີ້ຊ່າງແມ່ນຂ່າວດີນໍ້ພີ່ນ້ອງ! ພະເຍຊູລໍຖ້າທີ່ຈະເຮັດໃຫ້ພີ່ນ້ອງທຸກຄົນກັບຄືສູ່ຄອບຄົວຂອງພະເຈົ້າ ພະອົງລໍຄອຍຈະມອບຊີວິດນິລັນເທິງໂລກໃໝ່ໃຫ້ພີ່ນ້ອງທຸກຄົນ. ແຕ່ວ່າພີ່ນ້ອງຕ້ອງຕັດສິນໃຈ: ພີ່ນ້ອງຢາກໃຫ້ໃຜເປັນພະເຈົ້າແລະເປັນນາຍຂອງພີ່ນ້ອງ? ພະເຈົ້າຫລືຊາຕານ. ພີ່ນ້ອງທີ່ຮັກ ການຕັດສິນໃຈຂອງພີ່ນ້ອງກ່ຽວຂ້ອງເຖິງຄວາມເປັນຄວາມຕາຍ! ພີ່-ນ້ອງຈະຕັດສິນໃຈໃຫ້ພະຄຣິດເຂົ້າມາເປັນກະສັດໃນຊີວິດພີ່ນ້ອງດຽວນີ້ບໍ່?
ພະອົງກຳລັງຖ້າພີ່ນ້ອງຢູ່!

(ຄຳເຊີນຊວນ)
ອ້ອມແຂນພະອົງເປີດກວ້າງຕ້ອນຮັບພີ່ນ້ອງສະເໝີ. ພະອົງໄດ້ກ່າວວ່າ, "ມາ ຈົ່ງເຂົ້າມາ!" ພີ່ນ້ອງຈະຕອບເຊີນຂອງພະອົງບໍ່ວ່າ "ໂດຍ, ພະເຍຊູ, ຂ້າພະອົງກຳລັງມາ," ໃນຂະນະທີ່ພວກເຮົາອະທິ-ຖານນຳກັນ?